ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 197 ປທລ/2023

ນະຄອນຫຼວງວຽງຈັນ, ວັນທີ: 25 ເມສາ 2023

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

- ອີງຕາມໜັງສືແຈ້ງຈາກ ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ສະບັບລົງວັນທີ 25 ເມສາ 2023.
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ສະບັບເລກທີ 0017/ປທລ/2023, ລົງວັນທີ 05 ເມສາ 2023.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບວ່າ ບໍລິສັດ ຂໍເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຈາກວັນທີ 28 ເມສາ 2023 ເປັນ**ວັນທີ 12 ພຶດສະພາ 2023, ເວລາ 08:30 ໂມງ** (ເລີ່ມລົງທະບຽນເວລາ 08:00 ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ການເລື່ອນວັນທີຈັດກອງປະຊຸມໃນຄັ້ງນີ້ ເນື່ອງມາຈາກການກວດສອບພາຍນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ບໍ່ສາມາດ ອອກເອກະສານລາຍງານການເງິນ ປະຈຳປີ 2022 ສະບັບສົມບູນໃຫ້ ບໍລິສັດ ກ່ອນວັນທີ 28 ເມສາ 2023 ໄດ້. ສາຍເຫດເພາະ ຍ້ອນວ່າຍັງມີບາງເອກະສານທີ່ສຳຄັນທີ່ກ່ຽວຂ້ອງກັບການປິດງົບປະຈຳປີຍັງບໍ່ສົມບູນ.

ດັ່ງນັ້ນ, ບໍລິສັດ ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຫວ່າງ ຣັຕະນະວົງ